ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1555 /ກທຄວ.ອຄ

ນະຄອນຫລວງວຽງຈັນ,ວັນທີ 06 ພະຈິກ 2019

**ເຖິງ:** ເຈົ້າໜ້າທີ່ທະບຽນວິສາຫະກິດ,(ພະແນກ,ຫ້ອງການອຸດສາຫະກຳແລະ ການຄ້າຂັ້ນທ້ອງຖິ່ນ)

**ເລື່ອງ:** ການລະບຸເນື້ອໃນໝາຍເຫດໃສ່ດ້ານຫລັງໃບທະບຽນວິສາຫະກິດ.

- ອີງຕາມຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນວິສາຫະກິດ ສະບັບເລກທີ 0023/ອຄ.ກທຄວ,ລົງວັນທີ 9 ມັງກອນ 2019;

ເພື່ອຫລີກລ້ຽງການສວຍໂອກາດຂອງຜູ້ລົງທຶນ ໃນການນຳເອົາໃບທະບຽນວິສາຫະກິດ ໄປເຄື່ອນໄຫວດຳເນີນທຸລະກິດເລີຍ ໂດຍທີ່ບໍ່ທັນໄດ້ຮັບອະນຸຍາດ ຈາກພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງກ່ອນ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ ເພື່ອລະບຸເນື້ອໃນໝາຍເຫດ ໃສ່ດ້ານຫລັງໃບທະບຽນວິສາຫະກິດ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ ເວລາພິມໃບທະບຽນວິສາຫະກິດ ດັ່ງນີ້:

1. ສຳລັບດ້ານຫລັງໃບທະບຽນວິສາຫະກິດທີ່ ບໍ່ມີ ກິດຈະການທີ່ສາມາດເຄື່ອນໄຫວໄດ້ເລີຍ ໃຫ້ລະບຸວ່າ:

- ວິສາຫະກິດ ພາຍໃຕ້ໃບທະບຽນວິສາຫະກິດສະບັບນີ້ ສາມາດເຄື່ອນໄຫວທຸລະກິດໄດ້ສະເພາະໃນຂອບເຂດກິດ ຈະການທີ່ໄດ້ຮັບໃບອະນຸຍາດລົງທຶນ ຫລື ໃບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການກ່ຽວຂ້ອງເທົ່ານັ້ນ;
- ຫ້າມບໍ່ໃຫ້ນຳເອົາໃບທະບຽນວິສາຫະກິດ ໄປເຄື່ອນໄຫວທຸລະກິດໂດຍບໍ່ໄດ້ຮັບໃບອະນຸຍາດດັ່ງທີ່ກ່າວມາຢ່າງເດັດຂາດ ກໍລະນີລະເມີດຈະຖືກປະຕິບັດມາດຕະການຕາມກົດໝາຍແລະລະບຽບການຢ່າງເຂັ້ມງວດ.

2. ສຳລັບດ້ານຫລັງໃບທະບຽນວິສາຫະກິດທີ່ ມີ ກິດຈະການທີ່ສາມາດເຄື່ອນໄຫວໄດ້ເລີຍໃຫ້ລະບຸວ່າ:

- ນອກຈາກກິດຈະການທີ່ລະບຸຂ້າງເທິງນີ້ແລ້ວ ກ່ອນເຄື່ອນໄຫວດຳເນີນທຸລະກິດຕ້ອງໄດ້ຮັບໃບອະນຸຍາດລົງທຶນ ຫລື ໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການກ່ຽວຂ້ອງກ່ອນ;
- ຫ້າມບໍ່ໃຫ້ນຳເອົາໃບທະບຽນວິສາຫະກິດ ໄປເຄື່ອນໄຫວທຸລະກິດ ໃນກິດຈະການທີ່ຕ້ອງຂໍອະນຸຍາດຢ່າງເດັດຂາດ ກໍລະນີລະເມີດຈະຖືກປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

( ມີຕົວຢ່າງການພິມຄັດຕິດມາພ້ອມນີ້ ) .

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ດຣ.ສົມພອງ ພຽນພິນິດ

HUAWEI nova 3

ຕົວຢ່າງ: ການລະບຸໝາຍເຫດໃສ່ໃບທະບຽນວິສາຫະກິດໃນກໍລະນີ (ມີ) ກິດຈະການທີ່ສາມາດເຄື່ອນໄຫວໄດ້ເລີຍ

| ຂະແໜງ | ໝູ່ຍ່ອຍ | ກິດຈະການທີ່ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດທີ່ສາມາດເຄື່ອນໄຫວທຸລະກິດໄດ້ເລີຍມີຄື: |
|---|---|---|
| G | | ການຄ້າຂາຍຍົກ ແລະ ຂາຍຍ່ອຍ; ສ້ອມແປງລົດຍົນ ແລະ ລົດຈັກ |
| 46 | 46472 | ການຂາຍຍົກ ເຄື່ອງຫລີ້ນດົນຕີ,ເຄື່ອງຫລິ້ນ ແລະ ເຄື່ອງກິລາ<br>ດຳເນີນທຸລະກິດດ້ານ : ສົ່ງອອກເຄື່ອງໃຊ້ຫ້ອງການ. |
| 46 | 46499 | ການຂາຍຍົກເຄື່ອງໃຊ້ຄົວເຮືອນອື່ນໆ<br>ດຳເນີນທຸລະກິດດ້ານ : ສົ່ງອອກເຄື່ອງໃຊ້ໃຊ້ຄົວເຮືອນ. |
| | | • ນອກຈາກກິດຈະການທີ່ລະບຸຂ້າງເທິງນີ້ແລ້ວ ກ່ອນເຄື່ອນໄຫວດຳເນີນທຸລະກິດຕ້ອງໄດ້ຮັບໃບອະນຸຍາດລົງທຶນຫລືໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການກ່ຽວຂ້ອງກ່ອນ;<br>• ຫ້າມບໍ່ໃຫ້ນຳເອົາໃບທະບຽນວິສາຫະກິດ ໄປເຄື່ອນໄຫວທຸລະກິດ ໃນກິດຈະການທີ່ຕ້ອງຂໍອະນຸຍາດຢ່າງເດັດຂາດ ກໍລະນີລະເມີດຈະຖືກປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ. |

ຕົວຢ່າງ : ການລະບຸພາຍເຫດໃສ່ໃບທະບຽນວິສາຫະກິດໃນກໍລະນີ( ບໍ່ມີ ) ກິດຈະການທີ່ສາມາດເຄື່ອນໄຫວໄດ້ເລີຍ;

| ຂະແໜງ | ໝູ່ຍ່ອຍ | |
|---|---|---|
| | | • ວິສາຫະກິດ ພາຍໃຕ້ໃບທະບຽນວິສາຫະກິດສະບັບນີ້ສາມາດເຄື່ອນໄຫວທຸລະກິດໄດ້ສະເພາະໃນຂອບເຂດກິດ ຈະການທີ່ໄດ້ຮັບໃບອະນຸຍາດລົງທຶນ ຫລື ໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການກ່ຽວຂ້ອງເທົ່ານັ້ນ; <br> • ຫ້າມບໍ່ໃຫ້ນຳເອົາໃບທະບຽນວິສາຫະກິດ ໄປເຄື່ອນໄຫວທຸລະກິດໂດຍບໍ່ໄດ້ຮັບໃບອະນຸຍາດດັ່ງທີ່ກ່າວມາ ຢ່າງເດັດຂາດ ກໍລະນີລະເມີດຈະຖືກປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ. |

HUAWEI nova 3
AI CAMERA